ໂຄງການສິ່ງເສີມໂພຊະນາການຂອງຄອບຄົວຊາວກະສິກອນເຂດເນີນສູງ

ENUFF

Enhancing Nutrition of Upland Farming Families

# ການປູກພືດຜັກສວນຄົວ ແບບປະສົມປະສານ ແລະ ການປູກເປັນຂຸມ




Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

AGRISUD INTERNATIONAL

SNV Netherlands Development Organisation

# ຜົນປະໂຫຍດຂອງການປູກພືດຜັກແບບປະສົມປະສານ



ການປູກພືດຜັກຫຼາກຫຼາຍຊະນິດໃນໜານດຽວກັນສາມາດສະໜອງຜົນປະໂຫຍດທີ່ແຕກຕ່າງກັນ:

- **ປະຢັດພື້ນທີ່**: ຖ້າຫາກພື້ນທີ່ສວນຂອງທ່ານມີຂະໜາດນ້ອຍ, ແທນທີ່ຈະປູກພືດພຽງຊະນິດດຽວໃຫ້ໜາແໜ້ນ ແລະ ຫຼາຍຂຶ້ນໃນໜານດຽວ ພັດສິ່ງຜົນກະທົບທີ່ບໍ່ດີຕໍ່ຄຸນນະພາບຜົນຜະລິດພືດຜັກ, ເຮົາຄວນເລືອກປູກພືດ 2 - 3 ຊະນິດຕ່າງກັນ ໃນໜານດຽວທີ່ບໍ່ມີການຍາດແຍ່ງສານອາຫານຊະນິດດຽວກັນດີກວ່າ.

- **ຊ່ວຍປະຢັດເວລາ**: ເມື່ອທ່ານເຂົ້າໃຈດີເຖິງວິທີການປູກພືດປະສົມປະສານໄດ້ດີ, ຈະຊ່ວຍເຮັດໃຫ້ທ່ານປະຢັດເວລາຫຼາຍຂຶ້ນເຊິ່ງທ່ານສາມາດເລີ່ມປູກພືດຊະນິດອື່ນປະສົມໄດ້ເລີຍ ກ່ອນທີ່ຈະເກັບກ່ຽວພືດທີ່ຍັງຢູ່ໃນໜານ ຊ່ວຍປະຢັດເວລາໃນການນຳໃຊ້ພື້ນທີ່.

- **ຊ່ວຍປະຢັດນ້ຳ ແລະ ໃສ່ຝຸ່ນ**: ການປູກພືດປະສົມປະສານ 2-3 ຊະນິດ ທີ່ບໍ່ຍາດແຍ່ງອາຫານຊະນິດດຽວກັນ ຈະຊ່ວຍຫຼີກລ້ຽງການນຳໃຊ້ນ້ຳຫຼາຍ ເພື່ອຫົດຫຼາຍໜານພ້ອມກັນ ເປັນວິທີການປະຢັດນ້ຳທີ່ດີ. ທ່ານຍັງສາມາດຫຼຸດຜ່ອນການນຳໃຊ້ຝຸ່ນ ເນື່ອງຈາກພື້ນທີ່ທົ່ວໜານນັ້ນ ແມ່ນຖືກນຳໃຊ້ປູກພືດໝົດ.

- **ປ້ອງກັນສັດຕູພືດ**: ພືດຜັກບາງຊະນິດ ຫຼື ຕົ້ນດອກໄມ້ ສາມາດນຳມາປູກປະສົມປະສານໃສ່ກັບພືດຫຼັກ ເພື່ອປ້ອງກັນ ແລະ ຂັບໄລ່ສັດຕູພືດບາງຊະນິດໄດ້.

- **ເພີ່ມຄວາມຫຼາກຫຼາຍຂອງພືດຜັກ**: ເຖິງແມ່ນວ່າພື້ນທີ່ສວນຄົວຈະນ້ອຍ ແຕ່ເຮົາກໍ່ສາມາດປູກພືດຜັກຫຼາກຫຼາຍຊະນິດໄດ້ ເຊິ່ງສິ່ງຜົນດີຕໍ່ການປັບປຸງສະພາບໂພຊະນາການຂອງຄົວເຮືອນໄດ້ເປັນຢ່າງດີ.



ຜົນປະໂຫຍດຂອງການປູກພືດຜັກແບບປະສົມປະສານ

# ຫຼັກການ ໃນການປູກພືດ ປະສົມປະສານ



ບໍ່ໝາຍຄວາມວ່າ ພືດທຸກຊະນິດ ຈະສາມາດປູກປະສົມປະສານກັນໃນພື້ນທີ່ດຽວກັນ. ເຮົາຄວນຈະຕ້ອງຄຳນຶງເຖິງພືດທີ່ຈະປູກຢ່າງນ້ອຍດັ່ງນີ້:

- **ມີຂະໜາດຊົງພຸ່ມທີ່ແຕກຕ່າງກັນ**: ພືດຜັກທີ່ຈະນຳມາປູກເພື່ອປະສົມປະສານກັນໃນໜານນັ້ນ ຈະຕ້ອງເປັນພືດທີ່ບໍ່ຍາດແຍ່ງພື້ນທີ່ທາງນອກ ແລະ ໃນດິນ. ເຊັ່ນວ່າ: ການປູກຜັກສະລັດ ປະສົມປະສານກັບຜັກບົ່ວ ເພາະມັນຈະບໍ່ຍາດແຍ່ງພື້ນທີ່ກັນ ເນື່ອງຈາກວ່າຜັກສະລັດຈະຕ້ອງການພື້ນທີ່ເທິງໜ້າດິນໃນການຂະຫຍາຍໃບ ກົງກັນຂ້າມກັບຜັກບົ່ວຂະຫຍາຍຕົວໃນພື້ນດິນ.

- **ລະບົບຮາກທີ່ແຕກຕ່າງກັນ**: ພືດບາງຊະນິດໃຫ້ໝາກເປັນຕົ້ນແມ່ນ (ຕົ້ນໝາກເຂືອ, ໝາກເຜັດ) ມີລະບົບຮາກທີ່ຍາວ ແລະຢັ່ງລົງເລິກ ສາມາດຫາສານອາຫານຢູ່ພື້ນດິນ. ພວກມັນຈະບໍ່ຍາດແຍ່ງ ທາດອາຫານກັບພືດທີ່ມີລະບົບຮາກສັ້ນເປັນຕົ້ນແມ່ນປະເພດພືດຜັກທີ່ເປັນໃບເຊັ່ນ: ຜັກສະລັດ ຫຼື ຜັກກາດຊະນິດຕ່າງໆ ທີ່ຕ້ອງການນ້ຳ ແລະ ສານອາຫານຈາກສ່ວນເທິງຂອງໜ້າດິນ.

- **ຕ້ອງການແສງສະຫວ່າງທີ່ແຕກຕ່າງກັນ**: ພືດຜັກສ່ວນຫຼາຍແມ່ນຕ້ອງການແສງຕາເວັນເພື່ອຊ່ວຍໃນການຈະເລີນເຕີບໂຕ. ສະນັ້ນ ມັນຈຶ່ງບໍ່ໄດ້ງ່າຍສະເໝີໄປ ໃນການປູກພືດປະສົມປະສານ. ແຕ່ວ່າພືດສະໝຸນໄພທີ່ມີກິ່ນຫອມເຊັ່ນ: ຜັກຊີ, ຜັກຫອມປ້ອມ ແມ່ນສາມາດຂະຫຍາຍຕົວຢູ່ບ່ອນຮົ່ມໄດ້. ສະນັ້ນຈຶ່ງງ່າຍທີ່ຈະປູກພືດຊະນິດນີ້ຊັບຫວ່າງກັບພືດຜັກຊະນິດອື່ນໆ.

- **ຮອບວຽນພືດແຕກຕ່າງກັນ**: ພືດບາງຊະນິດຂະຫຍາຍຕົວໄວ ແຕ່ບາງຊະນິດແມ່ນຂະຫຍາຍຕົວຊ້າ. ໃນຂະນະທີ່ທ່ານຕັດສິນໃຈປູກພືດອາຍຸຍາວ, ແມ່ນໃຊ້ເວລາດົນໃນການຂະຫຍາຍຕົວ ແລະ ກິນເນື້ອທີ່ສວນ, ສະນັ້ນທ່ານສາມາດປູກພືດຊະນິດອື່ນທີ່ມີອາຍຸສັ້ນ ຊັບຫວ່າງພືດຫຼັກໃນຊ່ວງເວລາດຽວກັນ. ການປະຕິບັດແບບນີ້ຈະຊ່ວຍເຮັດໃຫ້ທ່ານສາມາດເກັບກູ້ຜົນຜະລິດຈາກພືດທີ່ມີອາຍຸສັ້ນກ່ອນ ແລະ ປະໃຫ້ພືດອາຍຸຍາວສືບຕໍ່ຂະຫຍາຍຕົວຕໍ່ໄປ. ຕົວຢ່າງ: ຖ້າ ທ່ານປູກໝາກເລັ່ນ, ທ່ານສາມາດປູກຜັກສະລັດ ຫຼື ຜັກກາດຊັບໃສ່ຫວ່າງພ້ອມກັນເລີຍ.





**ມີຂະໜາດຊົງພຸ່ມຂະຫຍາຍຕົວ**
ພື້ນທີ່ທາງນອກ ແລະ ໃນດິນ ຕ່າງກັນ



**ລະບົບຮາກທີ່ແຕກຕ່າງກັນ**
ໝາຍຄວາມວ່າ ຕ້ອງການ
ສານອາຫານ ແລະ ນ້ຳ ໃນດິນຕ່າງກັນ



**ຕ້ອງການແສງສະຫວ່າງ**
**ທີ່ແຕກຕ່າງກັນ**




**ຮອບວຽນການເຕີບໂຕ**
**ຂອງພືດແຕກຕ່າງກັນ**

# ຫຼັກການ ໃນການປູກພືດ ປະສົມປະສານ

# ຕົວຢ່າງການປູກພືດຜັກແບບປະສົມປະສານ



- **ການປູກໃນໄລຍະເວລາ ແຕກຕ່າງກັນໃນພື້ນທີ່ໜານດຽວກັນ**: ເລີ່ມປູກພືດທຳອິດສາກ່ອນ, ເມື່ອສັງເກດເບິ່ງພືດທີ່ປູກນັ້ນໃກ້ຈະໄດ້ເກັບກ່ຽວ ແມ່ນໃຫ້ເລີ່ມປູກພືດຊະນິດທີ່ສອງ. ຜັກຊະນິດທີ່ສອງຈະເລີ່ມຂະຫຍາຍຕົວ ແລະ ປົກຄຸມພື້ນທີ່ພາຍຫຼັງການເກັບກູ້ພືດທີ່ໄດ້ປູກທຳອິດ ➡ **ຈະຊ່ວຍເຮັດໃຫ້ປະຢັດເວລາໄດ້ !** ຕົວຢ່າງ: ຜັກສະລັດ ແລະ ໝາກແຕງ. ເຮົາສາມາດເອົາເບ້ຍໝາກແຕງມາປູກໃສ່ຫວ່າງຜັກສະລັດໃກ້ຈະເກັບກ່ຽວ, ວິທີນີ້ຈະເຮັດໃຫ້ໃບສະລັດຊ່ວຍປ້ອງກັນເບ້ຍອອນຈາກແສງແດດກ້າໄດ້ດີ ໃນໄລຍະທຳອິດຂອງການຂະຫຍາຍຕົວ.

- **ການປູກສະຫຼັບໃສ່ຫວ່າງຂອງແຖວພືດຜັກ**: ພວກເຮົາເຂົ້າໃຈດີວ່າຕ້ອງຮັກສາໄລຍະຫ່າງ ແລະ ຄວາມໜາແໜ້ນຂອງພືດຜັກໃຫ້ເໝາະສົມໃນເວລາປູກ. ຕົວຢ່າງ: ການປູກຜັກສະລັດ ແມ່ນຕ້ອງຮັກສາໄລຍະຫ່າງລະຫວ່າງຕົ້ນປະມານ 20 ຊມ. ສວນຫຼາຍເຮົາສັງເກດເຫັນວ່າເຮົາເສຍພື້ນທີ່ເປົ່າຫວ່າງນັ້ນລ້າໆ. ສະນັ້ນເຮົາຈຶ່ງຄວນເອົາພືດອື່ນມາປູກປະສົມປະສານເພື່ອເຕີມເຕັມພື້ນທີ່ເປົ່າຫວ່າງດັ່ງກາວ. ➡ **ຊ່ວຍປະຢັດພື້ນທີ່! ແລະ ຍັງເພີ່ມຄວາມຫຼາກຫຼາຍໃນພື້ນທີ່ດຽວກັນ!** ຕົວຢ່າງ: ຜັກບົ່ວໃບ ແລະ ຜັກກາດຫົວຂາວ. ໃນລະຫວ່າງຕົ້ນຂອງຜັກກາດ ຫົວຂາວ ແມ່ນຕ້ອງການພື້ນທີ່ຫຼາຍສະເພາະດ້ານເທິງ ສະນັ້ນເຮົາສາມາດປູກຜັກບົ່ວສະຫຼັບໃສ່ເພາະ ຜັກດັ່ງກາວແມ່ນ ບໍ່ຕ້ອງການພື້ນທີ່ດ້ານເທິງຄືກັບຜັກກາດ ມັນມີການຂະຫຍາຍຕົວໃນລວງຕັ້ງ ແລະ ມັນບໍ່ຂະຫຍາຍອອກດ້ານຂ້າງ.

- **ການປູກພືດສະໝຸນໄພຂັບໄລ່ສັດຕູພືດ ໃສ່ໃຈກາງ ຫຼື ອ້ອມຮອບພືດຫຼັກ**: ພືດຜັກບາງຊະນິດສາມາດຂັບໄລ່ສັດຕູພືດໄດ້ເນື່ອງຈາກມີກິ່ນຂົວ ແມງໄມ້ບໍ່ມັກ. ເຮົາສາມາດປູກໃສ່ສວນຄົວ ແບບປະສົມປະສານກັບພືດຊະນິດອື່ນໆ ເພື່ອຂັບໄລ່ສັດຕູພືດ. ຕົວຢ່າງ: ການປູກດອກດາວເຮືອງສະຫຼັບຫວ່າງກັບຜັກກະລຳປີ. ດອກດາວເຮືອງສາມາດເຮັດໜ້າທີ່ໃນການ ຂັບໄລ່ສັດຕູພືດໄດ້ເປັນຢ່າງດີ, ເປັນຕົ້ນແມ່ນຂີ້ກະເດືອນຝອຍທີ່ເປັນແມ່ກາຝາກໃນດິນທີ່ທຳລາຍລະບົບຮາກຂອງພືດ. **ເຮົາຍັງສາມາດປູກຜັກອີ່ຕູ່, ຜັກກ້ານກໍ່, ຫົວສີໄຄ** ອ້ອມຮອບຂອງສວນເຊິ່ງກິ່ນຂອງມັນຈະຊ່ວຍໃນການຂັບໄລ່ສັດຕູພືດໄດ້ເປັນຢ່າງດີ.


ຕົວຢ່າງການປູກພືດຜັກແບບປະສົມປະສານ

# ການປູກພືດຜັກແບບເປັນຂຸມ



ການປູກພືດເປັນຂຸມແມ່ນຫຍັງ? ແມ່ນວິທີການປູກພືດຜັກອີກວິທີໜຶ່ງເພື່ອແນ່ໃສປະຢັດພື້ນທີ່, ການທົດນ້ຳ ແລະ ການໃສ່ຝຸ່ນ. ພວກເຮົານຳໃຊ້ເຕັກນິກນີ້ໃນສວນຄົວໂດຍສະເພາະກັບພືດຜັກທີ່ຕ້ອງການພື້ນທີ່ຫຼາຍ.

ຕົວຢ່າງການປູກຕົ້ນໝາກເຂືອ. ຕົ້ນໝາກເຂືອຕ້ອງການໄລຍະຫ່າງລະຫວ່າງຕົ້ນແມ່ນ 60 ຊມ. ສະນັ້ນຖ້າຫາກເຮົາປູກໃສ່ໝານ ຈະເຮັດໃຫ້ເຮົາຕ້ອງປະໃຫ້ມີພື້ນທີ່ເປົ່າຫວ່າງຫຼາຍລະຫວ່າງຕົ້ນ. ພື້ນທີ່ເປົ່າຫວ່າງເຫຼົ່ານີ້ຈະໄດ້ຮັບການໃສ່ຝຸ່ນ ແລະ ການທົດນ້ຳເຊັ່ນດຽວກັນໃນຂະນະທີ່ເຮົາກະກຽມໝານ, ຍັງຕ້ອງການທົດ ແລະ ໃສຝຸ່ນເປັນປະຈຳອີກ **ມັນເປັນການສິ້ນເປືອງລ້າໆ!**

ການປູກເປັນຂຸມ ເຮົາຈະໄດ້ຂຸດ ແລະ ກະກຽມເປັນຂຸມ, ເວລາທົດນ້ຳ ແລະ ໃສ່ຝຸ່ນແມ່ນໃສ່ສະເພາະແຕ່ລະຂຸມ ຈຶ່ງເຮັດໃຫ້ປະຢັດນ້ຳ ແລະ ຝຸ່ນຂຶ້ນຕື່ມ ແລະ ເຮັດໃຫ້ພືດໄດ້ຮັບສານອາຫານພຽງພໍ. ວິທີນີ້ຍັງຊ່ວຍປະຢັດການຄຸມດິນດ້ວຍເຟືອງໄດ້ດີອີກ ເພາະເຮົາບໍ່ຈຳເປັນຕ້ອງປົກຄຸມໃຫ້ທົ່ວໝານ. ສະນັ້ນຈຶ່ງເຮັດໃຫ້ເຮົາປະຢັດ ນ້ຳ, ຝຸ່ນ ແລະ ການຄຸມດິນໄດ້!

ການປູກພືດຜັກແບບເປັນຂຸມ



# ຂັ້ນຕອນການປູກພືດຜັກເປັນຂຸມ



**1. ຄັດເລືອກພື້ນທີ່**: ບ່ອນທີ່ທ່ານຕ້ອງການປູກພືດທີ່ໃຊ້ພື້ນທີ່ຫຼາຍ. ປັກໝາຍແຕ່ລະຈຸດທີ່ຈະຂຸດເຮັດຂຸມ. ແນ່ນອນ, ມັນສຳຄັນຫຼາຍທີ່ຈະຕ້ອງຈັດສັນໃຫ້ລະອຽດ ກ່ອນທີ່ຈະເລີ່ມລົງມືຂຸດ. ໄລຍະຫ່າງລະຫວ່າງແຕ່ລະຂຸມແມ່ນຂຶ້ນກັບຊະນິດຂອງພືດທີ່ຈະນຳມາປູກ. **ຕົວຢ່າງ**: ຕົ້ນໝາກເລັ່ນແມ່ນມີໄລຍະຫ່າງລະຫວ່າງຕົ້ນ ແມ່ນ 80 ຊມ; ໝາກເຂືອ ແມ່ນ 60 ຊມ, ຜັກກະລຳປີ 60 ຊມ ແລະ ຖົ່ວຝັກຍາວ 30 ຊມ. ແຕ່ໃຫ້ລະມັດລະວັງສຳລັບພືດເປັນເຄືອເຊັ່ນ: ຖົ່ວຝັກຍາວ, ຄວນຮັກສາໄລຍະຫ່າງໃຫ້ກວ້າງພຽງພໍ 80 ຊມ ເພື່ອສາມາດປັກຄ້າງໃຫ້ມັນເລືອຂຶ້ນ.

**2. ການຂຸດຂຸມ**: ຂະໜາດຄວາມກວ້າງ ແລະ ຄວາມເລິກຂອງຂຸມແມ່ນຂຶ້ນກັບຊະນິດຂອງພືດເຊັ່ນດຽວກັນ.
*ຕົວຢ່າງ: ເສັ້ນຜ່າກາງຂຸມ ໝາກເລັ່ນແມ່ນ 50 ຊມ, ຕົ້ນໝາກເຂືອ  40 ຊມ; ກະລຳປີ 30 ຊມ; ຖົ່ວຝັກຍາວ 20 ຊມ.*

**3. ການໃສ່ຝຸ່ນ**: ປະສົມດິນດຳ ໃສ່ຝຸ່ນຊີວະພາບ ແລ້ວຕັກໃສ່ຂຸມ. ປົກຄຸມດ້ວຍເຟືອງ ແລ້ວຫົດນ້ຳ.

**4. ການປູກພືດໃສ່ຂຸມ**: ຖ້າຫາກຝຸ່ນຄອກທີ່ນຳມາໃສ່ນັ້ນເປັນຝຸ່ນທີ່ແຫ້ງແລ້ວ ແມ່ນເຮົາສາມາດປູກພືດໄດ້ເລີຍ. ແຕ່ຖ້າເປັນມູນສັດສົດ ຫຼື ຍັງປຽກແມ່ນຕ້ອງຕາກແດດປະໄວ້ 1 ອາທິດ. ການປູກດ້ວຍແກ່ນໂດຍກົງ ຫຼື ການປູກດ້ວຍເບ້ຍອ່ອນແມ່ນໃຫ້ປູກໃສ່ໃຈກາງຂອງຂຸມ ໃຫ້ເຂ່ຍເຟືອງທີ່ປົກຄຸມອອກທາງຂ້າງກ່ອນ, ຫົດນ້ຳອີກຄັ້ງກ່ອນຈຶ່ງປູກ. ຄວນເລືອກປູກຊ່ວງຕອນແລງແມ່ນໄດ້ຮັບຜົນທີ່ສຸດ ເພື່ອຫຼີກລ້ຽງ ແສງແດດກ້າ ຕ້ອງແສງ ໃສ່ເບ້ຍອ່ອນທີ່ຍ້າຍມາປູກໃໝ່.

# ຂັ້ນຕອນການປູກພືດຜັກເປັນຂຸມ

















# ແມ່ນໃຜເປັນຜູ້ກະກຽມວັດສະດຸ ອຸປະກອນ?

## ຜູ້ທີ່ໄດ້ຮັບຜົນປະໂຫຍດ ( ຜູ້ເຂົ້າຮ່ວມຝຶກອົບຮົມ).

ເຮົາຄວນກະກຽມຫຍັງແດ່?

ອຸປະກອນ:

1. ຈົກ.
2. ໄມ້ສຳລັບປັກໝາຍຂຸມ (ຄວນກະກຽມໃຫ້ຫຼາຍພໍ ຕາມຈຳນວນຂຸມທີ່ຕ້ອງການຈະຂຸດ).
3. ໄມ້ປ່ອງ ແລະ ຕອກ ຫຼື ເຊືອກ (ສຳລັບເຮັດປັກຄ້າງ).
4. ພ້າອີ່ໂຕ້ ຫຼື ມີດ (ສຳລັບຕັດໄມ້ ປັກຄ້າງ).
5. ບົວຫົດນ້ຳ.

ວັດສະດຸສິດ:

1. ເບ້ຍຜັກອ່ອນ ຫຼື ແກ່ນຖົ່ວ.
2. ຝຸ່ນຄອກແຫ້ງ ຫຼື ຝຸ່ນບົ່ມ.
3. ເຟືອງ ຫຼື ຕົ້ນເຟືອງແຫ້ງສຳລັບຄຸມດິນ.
4. ນ້ຳ.



ເຮົາຄວນກະກຽມວັດສະດຸ, ອຸປະກອນໃນເມື່ອໃດ? 1 ມື້ກ່ອນລ່ວງໜ້າ ຫຼື ຕອນເຊົ້າຂອງມື້ຝຶກອົບຮົມ.